ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 4218 /ກງ
ນະຄອນຫຼວງວຽງຈັນ, ວັນທີ 28 ທັນວາ 2018

# ຄຳແນະນຳ
## ວ່າດ້ວຍ ການເກັບອາກອນຊົມໃຊ້ຈາກ ຜະລິດຕະພັນເບຍ

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ) ເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີສະບັບປັບປຸງບາງມາດຕາ ສະບັບເລກທີ 057/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ມະຕິຄະນະປະຈຳແຫ່ງຊາດ ສະບັບເລກທີ 129/ຄປຈ, ລົງວັນທີ 04 ກັນຍາ 2018;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1476/ຫສນຍ.ກລຂ, ລົງວັນທີ 07 ກັນຍາ 2018.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ ດັ່ງນີ້:

### I. ຈຸດປະສົງ

ຄຳແນະນຳສະບັບນີ້ ແມ່ນເພື່ອຈັດຕັ້ງຜັນຂະຫຍາຍມະຕິຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 129/ຄປຈ, ລົງວັນທີ 04 ກັນຍາ 2018 ໂດຍການກຳນົດ ບັນດາຫຼັກການ, ຂັ້ນຕອນ, ວິທີການ ແລະ ມາດຕະການ ການເກັບອາກອນຊົມໃຊ້ ເພື່ອຮັບປະກັນຄວາມສະເໝີພາບລະຫວ່າງສິນຄ້າປະເພດດຽວກັນ ທີ່ນຳເຂົ້າຈາກຕ່າງປະເທດ ແລະ ສິນຄ້າທີ່ຜະລິດຢູ່ພາຍໃນປະເທດ.

### II. ຫຼັກການ

ການເກັບອາກອນຊົມໃຊ້ຈາກຜະລິດຕະພັນເບຍ ແມ່ນປະຕິບັດຕາມອັດຕາທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015 ໂດຍກຳນົດເອົາລາຄາຂາຍຍົກເປັນພື້ນຖານໃນການໄລ່ລຽງອາກອນຊົມໃຊ້ໃນຂອດຂາຍ ຍົກພາຍໃນປະເທດ ໂດຍແບ່ງອອກເປັນ 02 ປະເພດ ດັ່ງນີ້:

1. ຜະລິດຕະພັນເບຍທີ່ຜະລິດພາຍໃນປະເທດ ໃຫ້ຈັດເກັບອາກອນຊົມໃຊ້ຢູ່ຂອດຂາຍຍົກຈາກໂຮງງານຜະລິດ ຫຼື ຕົວແທນຈຳໜ່າຍ;
2. ຜະລິດຕະພັນເບຍທີ່ນຳເຂົ້າຈາກຕ່າງປະເທດ ໃຫ້ຈັດເກັບອາກອນຊົມໃຊ້ຢູ່ 2 ຂອດ ຄື: ຂອດການນຳເຂົ້າ ແລະ ຂອດຂາຍຍົກພາຍໃນປະເທດ.

## III. ຂັ້ນຕອນ

### 1. ຜະລິດຕະພັນເບຍທີ່ຜະລິດພາຍໃນປະເທດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

- ໃຫ້ຄິດໄລ່ ແລະ ແຈ້ງເສຍອາກອນຊົມໃຊ້ ຕາມມູນຄ່າຂາຍຍົກ ທີ່ບໍ່ລວມອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້;
- ໃຫ້ຍື່ນແຈ້ງເສຍອາກອນຊົມໃຊ້ຕໍ່ຂະແໜງການສ່ວຍສາອາກອນ ຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ.

### 2. ຜະລິດຕະພັນເບຍທີ່ນຳເຂົ້າຈາກຕ່າງປະເທດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

- ຂອດການນຳເຂົ້າ ແມ່ນໃຫ້ຄິດໄລ່ ແລະ ແຈ້ງເສຍອາກອນຊົມໃຊ້ ໃນເວລາແຈ້ງເສຍພາສີ-ອາກອນຢູ່ດ່ານພາສີບ່ອນນຳເຂົ້າ ໂດຍເອົາມູນຄ່າແຈ້ງເສຍພາສີ (ລາຄາ CIF) ບວກ ຄ່າພາສີຂາເຂົ້າ ແລະ ຄ່າທຳນຽມອື່ນ (ຖ້າມີ) ຄູນ ອັດຕາອາກອນຊົມໃຊ້;
- ຂອດການຂາຍພາຍໃນປະເທດ ແມ່ນໃຫ້ຄິດໄລ່ຕາມລາຄາຂາຍຍົກ (ບໍ່ລວມອາກອນມູນຄ່າເພີ່ມ) ລົບຖານຄິດໄລ່ອາກອນຊົມໃຊ້ໃນຂອດຂາເຂົ້າ ຄູນ ອັດຕາອາກອນຊົມໃຊ້;
- ໃຫ້ຍື່ນແຈ້ງເສຍອາກອນຊົມໃຊ້ ຂອດການຂາຍຍົກຕໍ່ຂະແໜງການສ່ວຍສາອາກອນ ຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ ພາຍຫຼັງການນຳເຂົ້າ. ໃນກໍລະນີ ບໍ່ສາມາດຍື່ນແຈ້ງ ເປັນແຕ່ລະເດືອນໄດ້ນັ້ນ ໃຫ້ຍື່ນແຈ້ງເສຍອາກອນຊົມໃຊ້ ຂອດການຂາຍຍົກ ຕໍ່ຂະແໜງການສ່ວຍສາອາກອນ ຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນທີສາມ ພາຍຫຼັງການນຳເຂົ້າ.

## IV. ວິທີການຄິດໄລ່ ອາກອນຊົມໃຊ້ຜະລິດຕະພັນເບຍ

### 1. ວິທີຄິດໄລ່ອາກອນຊົມໃຊ້ເບຍທີ່ຜະລິດພາຍໃນປະເທດ

ຜະລິດຕະພັນເບຍທີ່ຜະລິດພາຍໃນປະເທດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

ການຄິດໄລ່ ອາກອນຊົມໃຊ້ ຈາກຜະລິດຕະພັນເບຍທີ່ຜະລິດພາຍໃນປະເທດ ແມ່ນ ໃຫ້ຄິດໄລ່ຕາມລາຄາຂາຍຍົກຈາກໂຮງງານຜະລິດ ຫຼື ຕົວແທນຈຳໜ່າຍ ໂດຍໃຫ້ເອົາລາຄາຂາຍຍົກ (ບໍ່ລວມອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້) ຄູນ ອັດຕາອາກອນຊົມໃຊ້ ຕາມສູດການຄິດໄລ່ ລຸ່ມນີ້:

ຖານຄິດໄລ່ອາກອນຊົມໃຊ້ = ລາຄາຂາຍຍົກ (ບໍ່ລວມອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້).

ຄ່າອາກອນຊົມໃຊ້ = ຖານຄິດໄລ່ອາກອນຊົມໃຊ້ x ອັດຕາອາກອນຊົມໃຊ້.

**ຕົວຢ່າງ ກ**: ເບຍ ຍີ່ຫໍ້ B ທີ່ຖືກຜະລິດຢູ່ພາຍໃນປະເທດ ຈຳນວນ 01 ແກັດ ລາຄາຂາຍຍົກທີ່ບໍ່ລວມອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້ ເທົ່າກັບ 70.000 ກີບ. ສະນັ້ນ, ຄ່າອາກອນຊົມໃຊ້ເທົ່າກັບ 35.000 ກີບ ຕາມວິທີການຄິດໄລ່ອາກອນຊົມໃຊ້ ລຸ່ມນີ້:

ຖານຄິດໄລ່ອາກອນຊົມໃຊ້ = 70.000 ກີບ

ຄ່າອາກອນຊົມໃຊ້ = 70.000 ກີບ x 50% = **35.000 ກີບ**

### 2. ວິທີຄິດໄລ່ອາກອນຊົມໃຊ້ເບຍທີ່ນຳເຂົ້າຈາກຕ່າງປະເທດ

1. ການຄິດໄລ່ ອາກອນຊົມໃຊ້ ໃນຂອດການນຳເຂົ້າ ແມ່ນ ໃຫ້ຄິດໄລ່ ໃນເວລາແຈ້ງເສຍພາສີ-ອາກອນ ຢູ່ດ່ານບ່ອນນຳເຂົ້າ ໂດຍໃຫ້ເອົາມູນຄ່າແຈ້ງເສຍພາສີ (ລາຄາ CIF) ບວກຄ່າພາສີຂາເຂົ້າ ແລະ ຄ່າທຳນຽມອື່ນ (ຖ້າມີ) ຄູນອັດຕາອາກອນຊົມໃຊ້ ຕາມສູດການຄິດໄລ່ ລຸ່ມນີ້:

ຖານຄິດໄລ່ອາກອນຊົມໃຊ້ = ລາຄາ CIF + ຄ່າພາສີຂາເຂົ້າ + ຄ່າທຳນຽມອື່ນ (ຖ້າມີ).

ຄ່າອາກອນຊົມໃຊ້ຂອດນຳເຂົ້າ = ຖານຄິດໄລ່ອາກອນຊົມໃຊ້ x ອັດຕາອາກອນຊົມໃຊ້.

**ຕົວຢ່າງ ຂ**: ເບຍ ຍີ່ຫໍ້ K ນຳເຂົ້າຈາກຕ່າງປະເທດ ຈຳນວນ 01 ແກັດ ລາຄາ CIF ເທົ່າກັບ 100.000 ກີບ, ຄ່າພາສີເທົ່າກັບ 40.000 ກີບ (ອັດຕາພາສີ 40%), ຄ່າທານຽມອື່ນ 11.000 ກີບ. ສະນັ້ນ, ຄ່າອາກອນຊົມໃຊ້ຂອດການນຳເຂົ້າ ຈາກ ເບຍ ຍີ່ຫໍ້ K ແມ່ນ 75.500 ກີບ ຕາມວິທີການຄິດໄລ່ອາກອນຊົມໃຊ້ ລຸ່ມນີ້:

ຖານຄິດໄລ່ອາກອນຊົມໃຊ້ = 100.000 ກີບ + 40.000 ກີບ + 11.000 ກີບ = 151.000 ກີບ

ຄ່າອາກອນຊົມໃຊ້ຂອດການນຳເຂົ້າ = 151.000 ກີບ x 50% = **75.500 ກີບ**

2. **ການໄລ່ລຽງອາກອນຊົມໃຊ້ ຂອດການຂາຍພາຍໃນປະເທດ ຈາກເບຍນຳເຂົ້າແມ່ນໃຫ້ຄິດໄລ່ຕາມລາຄາຂາຍຍົກ (ບໍ່ລວມອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້) ລົບ ຖານຄິດໄລ່ອາກອນຊົມໃຊ້ໃນເວລານຳເຂົ້າ ຄູນ ອັດຕາອາກອນຊົມໃຊ້ ຕາມສູດການຄິດໄລ່ ດັ່ງນີ້:**

ຖານຄິດໄລ່ອາກອນຊົມໃຊ້ = ລາຄາຂາຍຍົກ (ບໍ່ລວມອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້) - ຖານຄິດໄລ່ອາກອນຊົມໃຊ້ຂອດການນຳເຂົ້າ.

ຄ່າອາກອນຊົມໃຊ້ຂອດການຂາຍພາຍໃນປະເທດ = ຖານຄິດໄລ່ອາກອນຊົມໃຊ້ x ອັດຕາອາກອນຊົມໃຊ້

**ຕົວຢ່າງ ຄ:** ເບຍ ຍີ່ຫໍ້ K ຕາມ **ຕົວຢ່າງ ຂ** ທີ່ມີລາຄາຂາຍຍົກ (ບໍ່ລວມອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້) ເທົ່າກັບ 240.000 ກີບ. **ສະນັ້ນ, ອາກອນຊົມໃຊ້ຂອດພາຍໃນ ທີ່ຕ້ອງຈ່າຍເພີ່ມແມ່ນ 44.500 ກີບ** ໂດຍມີວິທີການຄິດໄລ່ ອາກອນຊົມໃຊ້ຂອດພາຍໃນ ຂອງ ເບຍ ຍີ່ຫໍ້ K ດັ່ງນີ້:

ຖານຄິດໄລ່ອາກອນຊົມໃຊ້ = 240.000 ກີບ - 151.000 ກີບ = 89.000 ກີບ

ຄ່າອາກອນຊົມໃຊ້ຂອດການຂາຍຍົກພາຍໃນປະເທດ = 89.000 ກີບ x 50% = 44.500 ກີບ

**ສະນັ້ນ, ລວມອາກອນຊົມໃຊ້ທີ່ຕ້ອງຈ່າຍທັງໝົດ = 75.500 ກີບ + 44.500 ກີບ = 120.000 ກີບ**

3. **ພັນທະ ແລະ ໜ້າທີ່ ຂອງຜູ້ປະກອບການ ຜະລິດພາຍໃນ ຫຼື ນຳເຂົ້າ ຫຼື ເປັນຕົວແທນຈຳໜ່າຍ ຜະລິດຕະພັນເບຍ**

ຜູ້ປະກອບການ ຜະລິດພາຍໃນ ຫຼື ນຳເຂົ້າ ຫຼື ເປັນຕົວແທນຈຳໜ່າຍ ຜະລິດຕະພັນເບຍ ແມ່ນມີພັນທະ ແລະ ໜ້າທີ່ ດັ່ງນີ້:

1) ຜູ້ປະກອບການ ຜະລິດພາຍໃນ ຫຼື ນຳເຂົ້າ ຫຼື ເປັນຕົວແທນຈຳໜ່າຍ ຜະລິດຕະພັນເບຍ ຕ້ອງແຈ້ງ ຂໍ້ມູນກ່ຽວກັບການນຳເຂົ້າ ແລະ ລາຄາຂາຍຍົກ (ບໍ່ລວມອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້) ຂອງແຕ່ລະຜະລິດຕະພັນ ໃຫ້ ກະຊວງການເງິນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນແຕ່ລະໄລຍະ;
2) ສຳລັບຜະລິດຕະພັນເບຍ ທີ່ບໍ່ໄດ້ຮັບການຮັບຮອງ ຫຼື ບໍ່ມີການສະໜອງຂໍ້ມູນກ່ຽວກັບການນຳເຂົ້າ ແລະ/ຫຼື ລາຄາຂາຍຍົກພາຍໃນປະເທດ ແມ່ນຈະບໍ່ໄດ້ຮັບອະນຸຍາດໃຫ້ຜະລິດ ແລະ/ຫຼື ນຳເຂົ້າ ແລະ/ຫຼື ຈຳໜ່າຍ ໃນດິນແດນ ສປປ ລາວ;
3) ຄິດໄລ່, ແຈ້ງ ແລະ ມອບອາກອນໃຫ້ຖືກຕ້ອງ ແລະ ທັນເວລາ ຕາມທີ່ກຳນົດໄວ້ໃນກົດໝາຍ;
4) ຮັບຜິດຊອບຕໍ່ການ ຄິດໄລ່, ແຈ້ງ ແລະ ມອບອາກອນ ໃຫ້ຖືກຕ້ອງ ແລະ ຊັດເຈນ;
5) ຖືບັນຊີ ແລະ ນຳໃຊ້ໃບເກັບເງິນ ຕາມກົດໝາຍ ແລະ ລະບຽບການ;
6) ປະຕິບັດພັນທະ ແລະ ໜ້າທີ່ອື່ນ ຕາມກົດໝາຍ.

**4. ຄວາມຮັບຜິດຊອບຂອງຂະແໜງການລັດ ທີ່ກ່ຽວຂ້ອງ**

ກະຊວງການເງິນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງປະສານສົມທົບກັນ ໃນການລົງເກັບກຳຂໍ້ມູນລາຄາຂາຍຍົກຜະລິດຕະພັນເບຍແຕ່ລະຍີ່ຫໍ້, ປະເພດ ແລະ ຊະນິດ ເພື່ອສັງລວມ ແລະ ສົມທຽບກັບຂໍ້ມູນທີ່ສະໜອງໂດຍຜູ້ປະກອບການ ເພື່ອໄລ່ລຽງອາກອນຊົມໃຊ້ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ.

## V. ມາດຕະການຄຸ້ມຄອງ

**1. ການກຳນົດດ່ານພາສີສາກົນສຳລັບການນຳເຂົ້າຜະລິດຕະພັນເບຍ**

ການນຳເຂົ້າຜະລິດຕະພັນເບຍ ແມ່ນອະນຸຍາດໃຫ້ນຳເຂົ້າຜ່ານດ່ານພາສີສາກົນ ທີ່ມີພື້ນຖານໂຄງລ່າງ ແລະ ທີ່ຕັ້ງທີ່ເໝາະສົມ ດັ່ງນີ້:

1) ດ່ານພາສີສາກົນຂົວມິດຕະພາບ I (ນະຄອນຫຼວງວຽງຈັນ);
2) ດ່ານພາສີສາກົນຂົວມິດຕະພາບ II (ແຂວງສະຫວັນນະເຂດ);
3) ດ່ານພາສີສາກົນຂົວມິດຕະພາບ IV (ແຂວງບໍ່ແກ້ວ);
4) ດ່ານພາສີສາກົນບໍ່ເຕັນ (ແຂວງຫຼວງນ້ຳທາ);
5) ດ່ານພາສີສາກົນແດນສະຫວັນ (ແຂວງສະຫວັນນະເຂດ);
6) ດ່ານພາສີສາກົນໜອງນົກຂຽນ (ແຂວງຈຳປາສັກ).

ໃນກໍລະນີ ຜູ້ນຳເຂົ້າ ຫາກມີຈຸດປະສົງນຳເຂົ້າດ່ານສາກົນອື່ນ ທີ່ບໍ່ໄດ້ລະບຸໃນຂ້າງເທິງ ຕ້ອງເຮັດໜັງສືສະເໜີຂໍນຳເຂົ້າເປັນລາຍລັກອັກສອນ ຫາກະຊວງການເງິນ ເພື່ອພິຈາລະນາ ແລະ ອະນຸມັດ ຈຶ່ງສາມາດນຳເຂົ້າໄດ້.

**2. ການຂໍອະນຸຍາດຜະລິດ ແລະ ນຳເຂົ້າ ຜະລິດຕະພັນເບຍ**

ການຜະລິດ ແລະ ນຳເຂົ້າ ຜະລິດຕະພັນເບຍ ຕ້ອງມີໃບອະນຸຍາດ ຜະລິດ, ນຳເຂົ້າ ແລະ ຈຳໜ່າຍຜະລິດຕະພັນເບຍ ຈາກພາກສ່ວນ ທີ່ກ່ຽວຂ້ອງ, ຊຶ່ງອາຍຸຂອງໃບອະນຸຍາດດັ່ງກ່າວ ແມ່ນນຳໃຊ້ໄດ້ 1 ປີ ແລະ ສາມາດຕໍ່ໄດ້.

**3. ການຕິດສະຫຼາກພາສາລາວ ແລະ ຕິດສະແຕັມເສຍພາສີ**

ກ່ອນການກວດກາ ແລະ ນຳເອົາຜະລິດຕະພັນເບຍ ອອກຈາກໂຮງງານຜະລິດ ຫຼື ອະນາເຂດຄຸ້ມຄອງຂອງພາສີ ຫຼື ກ່ອນການຈຳໜ່າຍໃນທ້ອງຕະຫຼາດ, ຜູ້ປະກອບການ ຕ້ອງຕິດສະຫຼາກພາສາລາວ ຕາມລະບຽບການຂອງຂະແໜງການຄ້າ ແລະ ຕິດສະແຕັມເສຍພາສີ ຕາມລະບຽບການຂອງຂະແໜງພາສີ.

**4. ການກວດກາ ແລະ ສະກັດກັ້ນ**

ຂະແໜງການຄ້າພາຍໃນ ແລະ ຂະແໜງການພາສີ ມີໜ້າທີ່ກວດກາ, ຮິບ ຫຼື ດຳເນີນຄະດີ ຕໍ່ບຸກຄົນ, ນິຕິບຸກຄົນ ທີ່ນຳເຂົ້າຜະລິດຕະພັນເບຍມາຈຳໜ່າຍຕາມທ້ອງຕະຫຼາດຢູ່ພາຍໃນປະເທດ ທີ່ບໍ່ມີສະຫຼາກພາສາລາວ ແລະ/ຫຼື ບໍ່ມີສະແຕັມເສຍພາສີ ຕາມກົດໝາຍ ແລະ ລະບຽບການ.

**5. ມາດຕະການ ຕໍ່ຜູ້ລະເມີດ**

ກໍລະນີ ຜູ້ໄດ້ຮັບອະນຸຍາດໃຫ້ ຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ຫາກລະເມີດ ຫຼື ບໍ່ປະຕິບັດຕາມເງື່ອນໄຂ ທີ່ກຳນົດໄວ້ໃນຂໍ້ VI ມາດຕະການຄຸ້ມຄອງ ຂ້າງເທິງນີ້ ແມ່ນຈະຖືກພິຈາລະນາໃຫ້ໂຈະ ການເຄື່ອນໄຫວທຸລະກິດ ແລະ ດຳເນີນການຍົກເລີກ ຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ.

## VI. ມາດຕະການຈັດຕັ້ງປະຕິບັດ ແລະ ຜົນສັກສິດນຳໃຊ້ໄດ້

ມອບໃຫ້ກົມສ່ວຍສາອາກອນ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງໂຄສະນາ, ເຜີຍແຜ່, ແນະນຳ ແລະ ປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

ບັນດາ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ, ລັດວິສາຫະກິດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ຈົ່ງຮັບຮູ້ ແລະ ນຳໄປຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງ.

ຄຳແນະນຳສະບັບນີ້ ມີຜົນສັກສິດນຳໃຊ້ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງທີ່ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ຮອງນາຍົກລັດຖະມົນຕີ,**
**ລັດຖະມົນຕີກະຊວງການເງິນ**

ສົມດີ ດວງດີ